ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----------000--------

ກະຊວງການເງິນ

ກົມພາສີ

ເລກທີ: 00109 ..ກພສ

ນະຄອນຫຼວງວຽງຈັນ ວັນທີ: 11 OCT 201

## ສະໂນດນຳສົ່ງ

ຮຽນ : - ທ່ານຫົວໜ້າກົມນະໂຍບາຍການຄ້າຕ່າງປະເທດ, ກະຊວງອຸດສາຫະກຳ ແລະ ການຄ້າ.

- ທ່ານຫົວໜ້າກົມການນຳເຂົ້າ-ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ

ເລື່ອງ : ນຳສົ່ງຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງການເງິນ ກ່ຽວກັບການຈັດຕັ້ງປະຕິບັດ ໂຄງການທົດລອງທີ II ຂອງອາຊຽນກ່ຽວກັບການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ.

ກົມພາສີ ຂໍຖືເປັນກຽດນຳສົ່ງເອກະສານມາຍັງທ່ານ ດັ່ງລາຍລະອຽດລຸ່ມນີ້:

| ລ/ດ | ເນື້ອໃນເອກະສານ | ຈຳນວນ | ໝາຍເຫດ |
|---|---|---|---|
| 01 | ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງການເງິນ ກ່ຽວກັບການຈັດຕັ້ງປະຕິບັດໂຄງການທົດລອງທີ II ຂອງອາຊຽນກ່ຽວກັບການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ. ສະບັບເລກທີ 2962/ກງ, ລົງວັນທີ 09 ຕຸລາ 2013. | 01 ຊຸດ (04 ໜ້າ) | ເພື່ອຊາບ ແລະ ລາຍງານໃຫ້ແກ່ກອງເລຂາອາຊຽນ |
| | ລວມທັງໝົດ | 01 ຊຸດ | |

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ນຳໃຊ້ເພື່ອເປັນຂໍ້ມູນຕາມທາງຄວນ.

ຫົວໜ້າກົມພາສີ

ກະຊວງການເງິນ ກົມພາສີ

ທຽນຄະໜາທອງ ສີພັນດອນ

theanhanethong SIPHANDONE

ໃບປະສານງານ :
ພະແນກສ່ວນເປີຍຈສ໌ສາກົນ, ກົມພາສີ
ໂທລະ: 021-223524; ແຟັກ: 021 254034/ 021-223521
ອີເມວ: laocustoms.icd@gmail.com

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

2962 ---

ກະຊວງການເງິນ

ເລກທີ............/ກງ

ນະຄອນຫຼວງວຽງຈັນ, ວັນທີ...09 OCT 2013...

## ຂໍ້ຕົກລົງ

## ວ່າດ້ວຍການຈັດຕັ້ງປະຕິບັດໂຄງການທົດລອງທີ II ຂອງອາຊຽນ ກ່ຽວກັບການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ

## (The 2nd ASEAN Self-Certification Pilot Project)

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີສະບັບເລກທີ: 80/ນບ, ລົງວັນທີ: 28 ກຸມພາ 2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ.
- ອີງຕາມ ບົດບັນທຶກຊ່ວຍຈຳ (Memorandum of Understanding (MOU)) ໂຄງການທົດລອງທີ II ຂອງອາຊຽນກ່ຽວກັບການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ.
- ອີງຕາມ ແຈ້ງການຂອງຫ້ອງວ່າການລັດຖະບານ, ສະບັບເລກທີ: 32/ຫລບ.ກສສ, ລົງວັນທີ: 10 ມັງກອນ 2013 ວ່າດ້ວຍຮັບຮອງການຈັດຕັ້ງປະຕິບັດບົດບັນທຶກຊ່ວຍຈຳສຳລັບການເຂົ້າຮ່ວມໂຄງການທົດລອງການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງທີ II ຂອງອາຊຽນ.

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດໂຄງການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງໄດ້ດຳເນີນໄປຢ່າງມີປະສິດທິຜົນ ແລະ ຮັບປະກັນຄວາມຖືກຕ້ອງສອດຄ່ອງກັບຂັ້ນຕອນ, ລະບຽບການພາຍໃນ ແລະ ສາກົນ.

### ກະຊວງການເງິນ ອອກຂໍ້ຕົກລົງ ດັ່ງນີ້:

### I. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ເປັນການກຳນົດຫຼັກການ, ລະບຽບການສຳລັບລັດຖະການພາສີໃນການຄຸ້ມຄອງການນຳເຂົ້າສິນຄ້າຕາມໂຄງການທົດລອງ ທີ II ຂອງອາຊຽນກ່ຽວກັບວຽກງານຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ແນໃສ່ຮັບປະກັນຄວາມຖືກຕ້ອງສອດຄ່ອງກັບບົດບັນທຶກຊ່ວຍຈຳທີ່ລັດຖະບານລາວໄດ້ຮ່ວມລົງນາມ.

### II. ຄວາມໝາຍ

1. "ອາຊຽນ" ໝາຍເຖິງສະມາຄົມປະຊາຊາດແຫ່ງອາຊີຕາເວັນອອກສ່ຽງໃຕ້ ຊຶ່ງປະກອບດ້ວຍປະເທດ ບຣູໄນດາຣູສາລາມ, ລາຊະອານາຈັກ ກຳປູເຈຍ, ສາທາລະນະລັດ ອິນໂດເນເຊຍ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ສະຫະພັນທະລັດ ມາເລເຊຍ, ສະຫະພາບມຽນມາ, ສາທາລະນະລັດ ຟີລິບປິນ, ສາທາລະນະລັດ ສິງກະໂປ, ລາຊະອານາຈັກໄທ ແລະ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ.

2. "ປະເທດສະມາຊິກເຂົ້າຮ່ວມໂຄງການ" ແມ່ນປະເທດສະມາຊິກ ທີ່ໄດ້ຕົກລົງເຂົ້າຮ່ວມໃນໂຄງການທົດລອງທີ II ສໍາລັບການຈັດຕັ້ງປະຕິບັດລະບົບການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງພາຍໃນເຂດ ການຄ້າເສລີອາຊຽນ.
3. "ຜູ້ສົ່ງອອກ" ໝາຍເຖິງບຸກຄົນ ຫຼື ນິຕິບຸກຄົນ ທີ່ຕັ້ງຖິ່ນຖານຢູ່ໃນຂອບເຂດດິນແດນຂອງປະເທດສະມາຊິກເຂົ້າຮ່ວມໂຄງການ ບ່ອນທີ່ສິນຄ້າຖືກສົ່ງອອກໄປດ້ວຍບຸກຄົນເຫຼົ່ານັ້ນ.
4. "ຜູ້ນໍາເຂົ້າ" ໝາຍເຖິງບຸກຄົນ ຫຼື ນິຕິບຸກຄົນ ທີ່ຕັ້ງຖິ່ນຖານຢູ່ໃນຂອບເຂດດິນແດນຂອງປະເທດສະມາຊິກເຂົ້າຮ່ວມໂຄງການບ່ອນທີ່ສິນຄ້າຖືກນໍາເຂົ້າໄປດ້ວຍບຸກຄົນເຫຼົ່ານັ້ນ.
5. "ຜູ້ສົ່ງອອກທີ່ໄດ້ສິດໃນການຢັ້ງຢືນ" (Certified Exporter) ໝາຍເຖິງຜູ້ຜະລິດທີ່ໄດ້ຮັບອະນຸຍາດໃຫ້ອອກໃບແຈ້ງລາຄາແຫຼ່ງກໍາເນີດສິນຄ້າຂອງສິນຄ້າສົ່ງອອກ.
6. "ໃບແຈ້ງລາຄາແຫຼ່ງກໍາເນີດສິນຄ້າ" (Invoice Declaration) ໝາຍເຖິງການແຈ້ງແຫຼ່ງກໍາເນີດສິນຄ້າຢູ່ໃນໃບແຈ້ງລາຄາສິນຄ້າສົ່ງອອກທີ່ອອກໂດຍ ຜູ້ສົ່ງອອກທີ່ໄດ້ສິດໃນການຢັ້ງຢືນ.

## III. ການຄຸ້ມຄອງການນໍາເຂົ້າສິນຄ້າທີ່ມີການຢັ້ງຢືນແຫຼ່ງກໍາເນີດຈາກປະເທດສະມາຊິກເຂົ້າຮ່ວມໂຄງການ

ເຈົ້າໜ້າທີ່ພາສີຕ້ອງອໍານວຍຄວາມສະດວກໃຫ້ແກ່ສິນຄ້າທີ່ມີການນໍາເຂົ້າຕາມໂຄງການທົດລອງທີ II ຂອງອາຊຽນ ກ່ຽວກັບການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງຄືກັນກັບການອໍານວຍຄວາມ ສະດວກແກ່ສິນຄ້າທີ່ນໍາເຂົ້າຕາມຂອບການຄ້າດ້ານຜະລິດຕະພັນອາຊຽນ (ATIGA).

## IV. ຫຼັກການໃນການຮັບຮອງໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ

ໃບແຈ້ງລາຄາແຫຼ່ງກໍາເນີດສິນຄ້າຈະຖືກຮັບຮອງ ຕ້ອງມີອົງປະກອບດັ່ງລຸ່ມນີ້:

- ຕ້ອງລະບຸລາຍລະອຽດຂອງສິນຄ້າຢ່າງພຽງພໍ ເພື່ອສາມາດກໍານົດກ່ຽວກັບແຫຼ່ງກໍາເນີດສິນຄ້າ;
- ຕ້ອງຖືກລົງລາຍເຊັນ ພ້ອມລະບຸຊື່ຂອງຜູ້ສົ່ງອອກທີ່ໄດ້ສິດໃນການຢັ້ງຢືນແຫຼ່ງກໍາເນີດສິນຄ້າ;
- ວັນທີ, ເດືອນ, ປີ ທີ່ລະບຸໃນໃບແຈ້ງລາຄາແຫຼ່ງກໍາເນີດສິນຄ້າ ຈະຖືເປັນມື້ທີ່ອອກໃບແຈ້ງລາຄາແຫຼ່ງກໍາເນີດສິນຄ້າດັ່ງກ່າວ;
- ຕ້ອງມີຜົນບັງຄັບໃຊ້ໄດ້ເປັນເວລາ12ເດືອນ ນັບຈາກວັນ,ເດືອນ,ປີ ທີ່ອອກໃບແຈ້ງລາຄາແຫຼ່ງກໍາເນີດ;
- ບັນຊີລາຍຊື່, ແບບຢ່າງລາຍເຊັນ ແລະ ກາຈໍ້າຂອງຜູ້ສົ່ງອອກທີ່ໄດ້ສິດໃນການຢັ້ງຢືນຕ້ອງໄດ້ສະໜອງໃຫ້ແກ່ບັນດາປະເທດສະມາຊິກທີ່ເຂົ້າຮ່ວມໂຄງການ ໂດຍຜ່ານກອງເລຂາອາຊຽນ; ແລະ
- ຕ້ອງມີເນື້ອໃນເອກະສານ ລະບຸໄວ້ດ້ານລຸ່ມຂອງໃບແຈ້ງລາຄາແຫຼ່ງກໍາເນີດສິນຄ້າທຸກສະບັບ ຄືດັ່ງນີ້:
"ຜູ້ສົ່ງອອກສິນຄ້າທີ່ລະບຸໃນເອກະສານສະບັບນີ້ (ເລກລະຫັດຜູ້ສົ່ງອອກທີ່ໄດ້ສິດໃນການຢັ້ງຢືນເລກທີ:............) ຂໍແຈ້ງບອກເໜືອຈາກທີ່ໄດ້ລະບຸຢ່າງຈະແຈ້ງໄວ້ບ່ອນອື່ນວ່າສິນຄ້າ (ທີ່ມີເລກລະຫັດພາສີ:............) ແມ່ນສອດຄ່ອງກັບລະບຽບແຫຼ່ງກໍາເນີດ ເພື່ອຈະໄດ້ຮັບການພິຈາລະນາວ່າເປັນສິນຄ້າມີແຫຼ່ງກໍາເນີດຂອງອາຊຽນພາຍໃຕ້ສັນຍາການຄ້າຜະລິດຕະພັນ (ASEAN Trade in Goods Agreement (ATIGA)) (ປະເທດອາຊຽນຂອງແຫຼ່ງກໍາເນີດ: ...........................) ໂດຍກົດແຫຼ່ງກໍາເນີດ:................"

## V. ໜ້າທີ່ຂອງເຈົ້າໜ້າທີ່ພາສີ

1. ກວດກາ, ພິຈາລະນາ, ຮັບ, ປະຕິເສດໃບແຈ້ງລາຄາແຫຼ່ງກຳເນີດສິນຄ້າ;
2. ຮຽກຮ້ອງ/ຮ້ອງຂໍຜູ້ປະກອບການສະໜອງຂໍ້ມູນ/ຂໍ້ມູນເພີ່ມເຕີມ;
3. ໃຫ້ຄຳປຶກສາ, ແນະນຳແກ່ຜູ້ປະກອບການ;
4. ໂຄສະນາເຜີຍແຜ່ໂຄງການທົດລອງດັ່ງກ່າວໃຫ້ແກ່ພະນັກງານພາສີ ແລະ ຜູ້ປະກອບການ;
5. ປະສານງານພາຍໃນ/ຕ່າງປະເທດ; ແລະ
6. ສະໜອງຕົວເລກ, ສະຖິຕິການຄ້າ ໃຫ້ແກ່ຂະແໜງການກ່ຽວຂ້ອງ ແລະ ກອງເລຂາອາຊຽນ.

## VI. ການນະໂຍບາຍຕໍ່ຄວາມຜິດ ແລະ ຄວາມແຕກຕ່າງເລັກໜ້ອຍ.

ໃນເວລາກວດກາ ແລະ ພິຈາລະນາໃບແຈ້ງລາຄາແຫຼ່ງກຳເນີດສິນຄ້າ ທີ່ຢັ້ງຢືນໂດຍຜູ້ປະກອບການຜະລິດເພື່ອສົ່ງອອກນັ້ນ ຖ້າຫາກພົບເຫັນການກະທຳຜິດ ຫຼື ພົບເຫັນຄວາມແຕກຕ່າງເລັກໜ້ອຍ ເຈົ້າໜ້າທີ່ພາສີຈະມີນະໂຍບາຍໂດຍບໍ່ມີການປັບໄໝ ເມື່ອຄວາມຜິດ ແລະ ຄວາມແຕກຕ່າງດັ່ງກ່າວຫາກຕົກຢູ່ໃນ 7 ກໍລະນີດັ່ງລຸ່ມນີ້:

1. ການສະກົດ ຫຼື ຕົວພິມຜິດໃນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ;
2. ຂະໜາດຂອງເຄື່ອງໝາຍ (√ ) ແລະ ຮູບແບບການຕື່ມຂໍ້ມູນ (ຂຽນດ້ວຍມື ຫຼື ໃຊ້ເຄື່ອງພິມ) ລວມທັງການໝາຍ (X) ແທນໃສ່ເຄື່ອງໝາຍ (√ );
3. ຄວາມຄາດເຄື່ອນເລັກໜ້ອຍທາງດ້ານລາຍເຊັນອະນຸຍາດໃນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ແລະ ລາຍຊື່ຜູ້ອະນຸຍາດ;
4. ຄວາມແຕກຕ່າງທາງດ້ານຫົວໜ່ວຍວັດແທກທີ່ໄດ້ລະບຸໄວ້ໃນໃບແຈ້ງລາຄາແຫຼ່ງກຳເນີດສິນຄ້າ (Invoice Declaration), ໃບລາຍການບັນຈຸສິນຄ້າ (Packing List) ແລະ ເອກະສານອື່ນໆ;
5. ຄວາມແຕກຕ່າງເລັກນ້ອຍຂອງຂະໜາດເຈ້ຍ A4 ຂອງໃບແຈ້ງລາຄາແຫຼ່ງກຳເນີດສິນຄ້າ
6. ຄວາມຄາດເຄື່ອນເລັກໜ້ອຍຂອງສີນ້ຳມຶກ (ດຳ ຫຼື ຟ້າ) ກ່ຽວກັບເນື້ອໃນຂອງໃບແຈ້ງລາຄາແຫຼ່ງກຳເນີດສິນຄ້າ; ແລະ
7. ຄວາມແຕກຕ່າງເລັກໜ້ອຍທາງດ້ານເນື້ອໃນໃບແຈ້ງລາຄາແຫຼ່ງກຳເນີດສິນຄ້າ ແລະເອກະສານອື່ນໆທີ່ຄັດຕິດ.

## VII. ການກວດສອບຄືນຍ້ອນຫຼັງ

ປະເທດສະມາຊິກຜູ້ນຳເຂົ້າ ອາດຮ້ອງຂໍຕໍ່ໜ່ວຍງານທີ່ມີອຳນາດອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຂອງປະເທດສະມາຊິກຜູ້ສົ່ງອອກໃຫ້ມີການກວດສອບຄືນຍ້ອນຫຼັງໂດຍການສຸ່ມກວດ ແລະ/ຫຼື ເມື່ອມີຂໍ້ສົງໃສທີ່ມີເຫດຜົນຕໍ່ກັບຄວາມແທ້ຈິງຂອງເອກະສານ ຫຼື ຕໍ່ກັບຄວາມຖືກຕ້ອງຂອງຂໍ້ມູນກ່ຽວກັບແຫຼ່ງກຳເນີດທີ່ແທ້ຈິງຂອງສິນຄ້າທີ່ຖືກສົງໄສ ຫຼື ຂອງບາງສ່ວນຂອງສິນຄ້ານັ້ນ. ພາຍຫຼັງການຮ້ອງຂໍດັ່ງກ່າວ, ໜ່ວຍງານທີ່ມີອຳນາດອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຂອງປະເທດສະມາຊິກຜູ້ສົ່ງອອກຈະດຳເນີນການກວດສອບຄືນຍ້ອນຫຼັງຕາມເອກະສານຊີ້ແຈງຕົ້ນທຶນການຜະລິດຂອງຜູ້ຜະລິດ/ຜູ້ສົ່ງອອກໂດຍອີງໃສ່ຕົ້ນທຶນ ແລະ ລາຄາທີ່ລະບຸໄວ້ໃນມື້ທີ່ມີການສົ່ງອອກແຕ່ປູ່ພາຍໃນໄລຍະເວລາ 6 ເດືອນ ໂດຍມີເງື່ອນໄຂ 4 ຂໍ້ດັ່ງລຸ່ມນີ້:

1. ການຮ້ອງຂໍໃຫ້ມີການກວດສອບຄືນຍ້ອນຫຼັງ ຕ້ອງສົ່ງໄປພ້ອມກັບໃບແຈ້ງລາຄາແຫຼ່ງກຳເນີດສິນຄ້າທີ່ກ່ຽວຂ້ອງ ແລະ ຈະຕ້ອງລະບຸເຫດຜົນ ແລະ ຂໍ້ມູນເພີ່ມເຕີມຕ່າງໆ ທີ່ສະແດງໃຫ້ເຫັນເຖິງຄວາມບໍ່ຖືກຕ້ອງຂອງໃບແຈ້ງລາຄາແຫຼ່ງກຳເນີດດັ່ງກ່າວ; ຍົກເວັ້ນກໍລະນີການຂໍໃຫ້ກວດສອບຄືນຍ້ອນຫຼັງໂດຍການສຸ່ມກວດ;
2. ໜ່ວຍງານອອກໃບຢັ້ງຢືນແຫຼ່ງກຳເນີດທີ່ໄດ້ຮັບການຮ້ອງຂໍໃຫ້ກວດສອບຄືນຍ້ອນຫຼັງ ຕ້ອງຕອບຮັບການຮ້ອງຂໍໂດຍໄວ ແລະ ແຈ້ງຜົນໃຫ້ຮັບຮູ້ພາຍໃນ ໑໐ ວັນນັບຈາກມື້ທີ່ໄດ້ຮັບການຮ້ອງຂໍ;
3. ໜ່ວຍງານພາສີຂອງປະເທດສະມາຊິກຜູ້ນຳເຂົ້າ ອາດຈະຢຸດການໃຫ້ສິດທິພິເສດທາງດ້ານອັດຕາພາສີແກ່ສິນຄ້າດັ່ງກ່າວ ໃນຂະນະທີ່ລໍຖ້າຜົນຂອງການກວດສອບ. ແຕ່ຫາກສິນຄ້ານັ້ນບໍ່ແມ່ນສິນ ຄ້າເກືອດຫ້າມ ຫຼື ຈຳກັດໃນການນຳເຂົ້າ ແລະ ບໍ່ມີຂໍ້ສົງໃສໃນການປອມແປງ ສິນຄ້າດັ່ງກ່າວຈະຖືກປ່ອຍໃຫ້ແກ່ຜູ້ນຳເຂົ້າໂດຍຂຶ້ນກັບມາດຕະການໃນການບໍລິຫານທີ່ເຫັນວ່າຈຳເປັນ;
4. ໜ່ວຍງານທີ່ມີອຳນາດອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ຈະສົ່ງຜົນຂອງການກວດສອບໃຫ້ປະເທດສະມາຊິກຜູ້ນຳເຂົ້າທັນທີ ເຊິ່ງພາຍຫຼັງປະເທດດັ່ງກ່າວຈະພິຈາລະນາວ່າສິນຄ້າທີ່ຕ້ອງສົງໃສດັ່ງກ່າວໄດ້ແຫຼ່ງກຳເນີດ ຫຼື ບໍ່. ຂະບວນການທັງໝົດຂອງການກວດສອບຄືນຍ້ອນຫຼັງລວມທັງຂະບວນການແຈ້ງໃຫ້ໜ່ວຍງານອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຂອງປະເທດສະມາຊິກຜູ້ສົ່ງອອກກ່ຽວກັບຜົນຂອງການພິຈາລະນາວ່າສິນຄ້າໄດ້ແຫຼ່ງກຳເນີດ ຫຼື ບໍ່ນັ້ນ ຕ້ອງສຳເລັດພາຍໃນ 180 ວັນ. ໃນຂະນະລໍຖ້າຜົນຂອງການກວດສອບຍ້ອນຫຼັງ ໃຫ້ປະຕິບັດຕາມຂໍ້ທີ 7.3 ຂ້າງເທິງ.

## VIII. ການຮັກສາຄວາມລັບ

1. ແຕ່ລະປະເທດສະມາຊິກເຂົ້າຮ່ວມໂຄງການທົດລອງ ຈະຕ້ອງຮັບຜິດຊອບຮັກສາຄວາມລັບຂອງເອກະ ສານ, ຂໍ້ມູນຂ່າວສານ ແລະ ຂໍ້ມູນອື່ນໆ ທີ່ໄດ້ຮັບ ແລະ ໄດ້ສົ່ງໃຫ້ກັນ ແລະ ກັນໃນໄລຍະການຈັດຕັ້ງ ປະ ຕິບັດບົດບັນທຶກຊ່ວຍຈຳສະບັບນີ້.
2. ແຕ່ລະປະເທດສະມາຊິກເຂົ້າຮ່ວມໂຄງການທົດລອງ ຈະບໍ່ອະນຸຍາດໃຫ້:
   ກ. ເປີດເຜີຍທຸກຂໍ້ມູນຂ່າວສານລັບທີ່ປະເທດສະມາຊິກອື່ນສະໜອງໃຫ້ ບໍ່ວ່າຈະດ້ວຍທາງກົງ ຫຼື ທາງອ້ອມກໍ່ຕາມ.
   ຂ. ນຳໃຊ້ຂໍ້ມູນລັບຂອງປະເທດສະມາຊິກອື່ນ ນອກຈາກຈຸດປະສົງນຳໃຊ້ທີ່ໄດ້ລະບຸໄວ້ໃນບົດບັນທຶກຊ່ວຍຈຳສະບັບນີ້ ກ່ອນການໄດ້ຮັບອະນຸຍາດຈາກປະເທດສະມາຊິກເຂົ້າຮ່ວມໂຄງການທົດລອງ.

## IX. ມາດຕະການຕໍ່ການກະທຳຜິດ

ການປະຕິບັດມາດຕະການຕໍ່ແຕ່ລະສະຖານການກະທຳຜິດ ແມ່ນປະຕິບັດຕາມກົດໝາຍວ່າດ້ວຍພາສີ ສະບັບເລກທີ: 04/ສພຊ, ລົງວັນທີ: 20 ທັນວາ 2011 ແລະ ກົດໝາຍອື່ນໆ ທີ່ກ່ຽວຂ້ອງ.

## X. ມອບໃຫ້ກົມພາສີ ສົມທົບກັບຂະແໜງການຂ້ອງຈັດຕັ້ງປະຕິບັດ ແລະ ດຳເນີນການໂຄສະນາເຜີຍແຜ່ໃຫ້ແກ່ສັງຄົມໄດ້ຮັບຊາບ.

## XI. ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ ວ່າການກະຊວງການເງິນ.

ພູເພັດ ຄຳພູນວົງ